# ອະນຸສັນຍາ 02
# ຄໍາທໍານຽມກ່ຽວກັບການຂົນສົ່ງຂ້າມແດນ

**ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາ ທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອການອໍານວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນ ຂ້າມແດນ (ຕໍ່ໄປນີ້ເອີ້ນວ່າ: "ອະນຸສັນຍາ");**

ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະ ຊາທິປະ ໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິ ຍົມ ຫວຽດນາມ (ຕໍ່ ໄປນີ້ເອີ້ນວ່າ: "ລັດພາຄີ");

ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລັດ ຖະບານແຫ່ງ ລາຊະອານາຈັກ ໄທ ແລະ ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອ ການອໍານວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນຂ້າມແດນ ຊຶ່ງໄດ້ລົງນາມຄັ້ງທໍາອິດໃນວັນທີ 26 ພະຈິກ 1999 ທີ່ ນະຄອນຫຼວງວຽງຈັນ ແລະ ມີການດັດແກ້ເພີ່ມເຕີມໃນວັນທີ 29 ພະຈິກ 2001 ທີ່ ນະ ຄອນຫຼວງຢາງກຸ້ງ, ເຊິ່ງລາຊະ ອານາຈັກ ກໍາປູເຈຍ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 29 ພະຈິກ 2001 ທີ່ ນະຄອນຫຼວງຢາງກຸ້ງ, ສາທາລະນະລັດ ປະຊາຊົນ ຈີນ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 03 ພະຈິກ 2002 ທີ່ ພະນົມເປນ ແລະ ສະຫະພາບ ມຽນມາ ໄດ້ ຖືກຮັບເຂົ້າເປັນພາຄີ ໃນວັນທີ 19 ກັນຍາ 2003 ທີ່ ເມືອງຕາລີ ແລະ ມີການດັດແກ້ເພີ່ມເຕີມ ໃນວັນທີ 30 ເມສາ 2004 ທີ່ ພະນົມເປນ (ຕໍ່ໄປນີ້ເອີ້ນວ່າ: "ສັນຍາ");

ອີງຕາມມາດຕາ 03 (ບ) ຂອງສັນຍາ ຊຶ່ງມີຜົນໃຫ້ເອກະສານຊ້ອນທ້າຍ ແລະ ອະນຸສັນຍາ ຕ້ອງກໍາ ນົດລາຍ ລະອຽດທາງດ້ານເຕັກນິກ ຫຼື ເວລາ ແລະ/ຫຼື ສະຖານທີສະເພາະ ແລະ ໃຫ້ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຖື ເປັນສ່ວນໜຶ່ງຂອງສັນຍາ ແລະ ມີຜົນບັງຄັບໃຊ້ເທົ່າທຽມກັນ;

ອີງຕາມມາດຕາ 36 ຂອງສັນຍາທີ່ມີການດັດແກ້, ການລົງນາມ ແລະ ການໃຫ້ສັດຕະຍາບັນ ຫຼື ການຮັບຮອງ ແລະ ການມີຜົນບັງຄັບໃຊ້ຂອງສັນຍາ ອາດຈໍາແນກອອກຈາກເອກະສານຊ້ອນທ້າຍ ແລະ ອະ ນຸສັນຍາ;

ອີງຕາມກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ 6 ປະເທດ ຄັ້ງທີ 9 ທີ່ມະນີລາ ໃນເດືອນ ມັງກອນ 2000, ກອງປະຊຸມການຂົນສົ່ງພາຍໃຕ້ການຮ່ວມມືໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ຄັ້ງ 7 ທີ່ ໂຮ ຈິມິນ ໃນເດືອນ ສິງຫາ 2002 ແລະ ກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນ ລຸ່ມແມ່ນໍ້າຂອງ 6 ປະເທດ

ຄັ້ງທີ 11 ທີ່ ພະນົມເປນ ໃນເດືອນ ກັນຍາ 2002 ຊຶ່ງລັດຖະບານຂອງລັດພາຄີ ໄດ້ຕົກລົງເຫັນດີຕໍ່ແຜນງານການສ້າງສັນຍາ ແລະ ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຄັດຕິດສັນຍາສະບັບນີ້ໃຫ້ສໍາເລັດໃນປີ 2005; ແລະ

ອີງຕາມມາດຕາ 08 ຂອງສັນຍາສະບັບນີ້ ຊຶ່ງກໍານົດໃຫ້ມີອະນຸສັນຍານີ້ ເພື່ອກໍານົດລາຍລະອຽດ ທາງດ້ານເຕັກນິກ.

**ໄດ້ມີການຕົກລົງ ດັ່ງຕໍ່ໄປນີ້:**

## ມາດຕາ 01: ບົດບັນຍັດທົ່ວໄປ.

ກ. ການອະທິບາຍຄໍາສັບ:

ເພື່ອຈຸດປະສົງຂອງອະນຸສັນຍານີ້: ຄໍາສັບທີ່ຂີດກ້ອງນີ້ແມ່ນມີຄວາມໝາຍ ດັ່ງຕໍ່ໄປນີ້:

1. ຄ່າທໍານຽມ: ຄ່າທໍານຽມ, ຄ່າຜ່ານທາງ, ພາສີ ຫຼື ເງິນທີ່ຮຽກເກັບອື່ນໆຈາກການດໍາເນີນການຂົນສົ່ງ, ຍົກເວັ້ນພາສີ.
2. ການຂົນສົ່ງຂ້າມແດນ: ການຂົນສົ່ງລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ.
3. ການຂົນສົ່ງລະຫວ່າງປະເທດ: ການຂົນສົ່ງເຂົ້າ ແລະ ອອກດິນແດນລະຫວ່າງລັດພາຄີ 02 ປະເທດ.
4. ການຂົນສົ່ງຜ່ານແດນ: ການຂົນສົ່ງຂ້າມດິນແດນຂອງລັດພາຄີຝ່າຍໜຶ່ງ ເມື່ອການຂົນສົ່ງຜ່ານດິນແດນນັ້ນເປັນພຽງສ່ວນໜຶ່ງຂອງການເດີນທາງທີ່ສົມບູນ ທີ່ມີຈຸດເລີ່ມຕົ້ນ ແລະ ຈຸດປາຍທາງໃນລັດພາຄີອື່ນໆ.
5. ການບໍ່ເລືອກປະຕິບັດ: ການປະຕິບັດທີ່ເທົ່າທຽມກັນໃນສະຖານະການດຽວກັນ ໂດຍປະ ສາຈາກການເລືອກປະຕິບັດທີ່ບໍ່ເໝາະສົມ.

ຂ. ຂອບເຂດການນໍາໃຊ້.

ອະນຸສັນຍາສະບັບນີ້ໃຊ້ກັບການຈະລາຈອນຂ້າມແດນ.

## ມາດຕາ 02: ການບໍ່ເລືອກປະຕິບັດ.

ກ. ໂດຍບໍ່ລະເລີຍເນື້ອຫາສໍາຄັນຂອງສັນຍາສອງຝ່າຍທີ່ມີຢູ່ບັງຄັບໃຊ້ໃນເຂດຊາຍພິເສດ ເຊິ່ງມີການເລືອກປະຕິບັດ, ປະເທດຜູ້ຮັບຈະຮຽກເກັບຄ່າທໍານຽມໂດຍບໍ່ມີການເລືອກປະຕິບັດຕໍ່:

1. ບັນດາປະເທດອື່ນໆບົນພື້ນຖານຂອງສັນຊາດຂອງຜູ້ດໍາເນີນການຂົນສົ່ງ, ສະຖານທີ່ຈົດທະ ບຽນຂອງພາຫະນະ ຫຼື ຈຸດຕົ້ນທາງ ຫຼື ຈຸດປາຍທາງຂອງການດໍາເນີນການຂົນສົ່ງ; ແລະ
2. ໂດຍສະເພາະຢ່າງຍິ່ງລະຫວ່າງການຈະລາຈອນຂ້າມແດນ ແລະ ການຈະລາຈອນພາຍໃນປະເທດນັ້ນໆ.

ຂ. ເຖິງຢ່າງໃດກໍ່ຕາມ, ລັດພາຄີທີ່ດ້ອຍພັດທະນາ (ພິຈາລະນາບົນພື້ນຖານການກຳນົດປະເທດ ດ້ອຍພັດທະນາຂອງອົງການສະຫະປະຊາຊາດ) ອາດເລືອກປະຕິບັດໃນການເກັບອັດຕາຄ່າຜ່ານທາງ ແລະ ຄ່າທຳນຽມອື່ນໆ ກັບພະຫະນະທີ່ຈົດທະບຽນໃນດິນແດນຂອງຕົນໄດ້ເມື່ອມີການຂົນສົ່ງພາຍໃນປະເທດ.

## ມາດຕາ 03: ຄວາມໂປ່ງໃສ.

ກ. ລັດພາຄີ ຈະແລກປ່ຽນຂໍ້ມູນດ້ານຄ່າທຳນຽມການຈະລາຈອນຂ້າມແດນຕາມມາດຕາ 31 ຂອງສັນຍາ ແລະ ມາດຕາ 07 ຂອງເອກະສານຊ້ອນທ້າຍ 04 ຂອງສັນຍາ.

ຂ. ລັດພາຄີ ແຕ່ລະຝ່າຍຈະແຈ້ງໃຫ້ຄະນະກຳມະການອຳນວຍຄວາມສະດວກການຂົນສົ່ງແຫ່ງຊາດຂອງລັດພາຄີອື່ນຮັບຮູ້ເຖິງການປ່ຽນແປງຄ່າທຳນຽມການຈະລາຈອນຂ້າມແດນຢ່າງໜ້ອຍ 15 ວັນ ກ່ອນວັນມີຜົນປະຕິບັດ.

## ມາດຕາ 04: ດ້ານກົດໝາຍ.

ລັດພາຄີ ຈະດຳເນີນມາດຕະການທີ່ຈຳເປັນເພື່ອໃຫ້:

1. ທຸກຄ່າທຳນຽມທີ່ຖືກເກັບບົນພື້ນຖານຂອງກົດໝາຍເທົ່ານັ້ນ;
2. ໜ່ວຍງານທີ່ໄດ້ຮັບມອບອຳນາດທາງກົດໝາຍເທົ່ານັ້ນເປັນຜູ້ຈັດເກັບຄ່າທຳນຽມ;
3. ມີການອອກໃບບິນຮັບເງິນຕົວຈິງເມື່ອມີການຈ່າຍຄ່າທຳນຽມ;
4. ຫ້າມບໍ່ໃຫ້ມີການເກັບຄ່າທຳນຽມທີ່ບໍ່ໄດ້ຮັບອະນຸຍາດ ແລະ ຈະມີການລົງໂທດຕາມກົດໝາຍ ແລະ ລະບຽບການພາຍໃນປະເທດ ຫຼື ດຳເນີນການທາງອາຍາ; ແລະ
5. ຜູ້ທີ່ຖືກຮຽກເກັບຄ່າທຳນຽມທີ່ຜິດກົດໝາຍສາມາດຍື່ນຟ້ອງຮ້ອງໄດ້.

## ມາດຕາ 05: ປະສິດທິພາບໃນການເກັບຄ່າທຳນຽມ.

ລັດພາຄີ ຈະປ້ອງກັນການເກັບຄ່າທຳນຽມ ເພື່ອບໍ່ໃຫ້ເປັນອຸປະສັກຕໍ່ການອຳນວຍຄວາມສະດວກໃນການຂົນສົ່ງຂ້າມແດນເຊັ່ນ: ລວມການເກັບຄ່າທຳນຽມໄວ້ໃນຂັ້ນຕອນການກວດກາພາສີຕາມມາດຕາ 04 ແລະ 35 ຂອງສັນຍາ ແລະ ເອກະສານຊ້ອນທ້າຍ 04 ຂອງສັນຍາ.

## ມາດຕາ 06: ຄ່າທຳນຽມທີ່ໄດ້ຮັບອະນຸຍາດ.

ກ. ລັດພາຄີ ອາດຮຽກເກັບຄ່າທຳນຽມການຂົນສົ່ງຂ້າມແດນ ຊຶ່ງຢູ່ພາຍໃຕ້ເງື່ອນໄຂທີ່ໄດ້ກຳນົດ ໄວ້ໃນອະນຸສັນຍານີ້ ດັ່ງຕໍ່ໄປນີ້:

1. ຄ່າຜ່ານທາງ, ຈັດເກັບໂດຍກົງສຳຫຼັບການໃຊ້ເສັ້ນທາງຖະໜົນ, ຂົວຂ້າມ, ອຸໂມງ ແລະ ເຮືອຂ້າມຟາກ;

2. ຄ່າທຳນຽມບັນທຸກນໍ້າໜັກເກີນກ່ອນທີ່ໄດ້ຮັບອະນຸຍາດຕາມກົດໝາຍພາຍໃນປະເທດ ແລະ/ຫຼື ລະບຽບຂອງປະເທດຜູ້ຮັບ;

3. ຄ່າທຳນຽມການບໍລິຫານຈັດການ;

4. ຄ່າທຳນຽມການໃຊ້ສິ່ງອຳນວຍຄວາມສະດວກ ຫຼື ບໍລິການຕ່າງໆ;

5. ພາສີນໍ້າມັນເຊື້ອໄຟທີ່ຊື້ໃນປະເທດຜູ້ຮັບ; ແລະ

6. ຄ່າທຳນຽມການບຳລຸງຮັກສາເສັ້ນທາງ (ທີ່ບໍ່ໄດ້ລວມຢູ່ໃນຄ່າທຳນຽມທີ່ໄດ້ກ່າວມາຂ້າງ ເທິງ).

ຂ. ລັດພາຄີ ຈະຍົກເວັ້ນການຮຽກເກັບຄ່າທຳນຽມການຈະລາຈອນຂ້າມແດນໃດໆນອກເໜືອ

ຈາກທີ່ລະບຸໄວ້ຂ້າງເທິງ.

## ມາດຕາ 07: ພາສີນໍ້າມັນເຊື້ອໄຟ.

ກ. ປະເທດຜູ້ຮັບອາດເກັບພາສີນໍ້າມັນເຊື້ອໄຟຈາກພາຫະນະທີ່ໃຊ້ໃນການຈະລາຈອນຂ້າມແດນທີ່ມາເຕີມນໍ້າມັນເຊື້ອໄຟພາຍໃນດິນແດນຂອງຕົນ.

ຂ. ປະເທດຜູ້ຮັບຈະຍົກເວັ້ນພາສີນໍ້າມັນເຊື້ອໄຟຈາກນໍ້າມັນທີ່ໄດ້ບັນຈຸຢູ່ໃນຖັງນໍ້າມັນປົກກະຕິທີ່ບໍ່ໄດ້ດັດແປງພາຫະນະນັ້ນທີ່ໃຊ້ໃນການຈະລາຈອນຂ້າມແດນມາຫາດິນແດນຂອງຕົນ.

ຄ. ເຖິງຢ່າງໃດກໍ່ຕາມ, ລັດພາຄີ ຈະຕ້ອງເຮັດໃຫ້ແນ່ໃຈໄດ້ວ່າບໍ່ມີພາຫະນະໃດທີ່ໃຊ້ໃນການຈະລາຈອນຂ້າມແດນ (ທັງຜ່ານແດນ ແລະ ລະຫວ່າງປະເທດ) ຖືກບັງຄັບໃຫ້ເຕີມນໍ້າມັນກ່ອນອອກຈາກດິນແດນຂອງຕົນ.

## ມາດຕາ 08: ຄ່າທຳນຽມບຳລຸງຮັກສາເສັ້ນທາງ.

ຄ່າທຳນຽມບຳລຸງຮັກສາເສັ້ນທາງທີ່ປະເທດຜູ້ຮັບຮຽກເກັບຈາກພາຫະນະທີ່ໃຊ້ໃນການຈະລາຈອນຂ້າມຊາຍແດນ (ທັງຜ່ານແດນ ແລະ ລະຫວ່າງປະເທດ) ຈະຕ້ອງເປັນມາດຕະຖານດຽວກັນກັບຄ່າທຳນຽມ ບຳລຸງຮັກສາເສັ້ນທາງທີ່ປະເທດຜູ້ຮັບຮຽກເກັບຈາກພາຫະນະພາຍໃນປະເທດ. ຄ່າທຳນຽມບຳລຸງຮັກສາເສັ້ນທາງຂອງປະເທດຜູ້ຮັບທີ່ຮຽກເກັບຈາກພາຫະນະທີ່ໃຊ້ໃນການຈະລາຈອນຂ້າມແດນ (ທັງຜ່ານແດນ ແລະ ລະຫວ່າງປະເທດ) ອາດຢູ່ບົນພື້ນຖານສັດສ່ວນໄລຍະເວລາທີ່ຢູ່ໃນດິນແດນຂອງຕົນຕໍ່ໄລຍະເວລາທີ່ພາຫະນະພາຍໃນປະເທດຈ່າຍຄ່າທຳນຽມບຳລຸງຮັກສາເສັ້ນທາງ.

## ມາດຕາ 09: ການດັດແກ້.

ລັດພາຄີໃດໜຶ່ງ ສາມາດສະເໜີໃຫ້ມີການດັດແກ້ອະນຸສັນຍາໄດ້ ໂດຍຜ່ານຄະນະກຳມະການ ຮ່ວມ, ການດັດແກ້ດັ່ງກ່າວຈະຕ້ອງຜ່ານການເຫັນດີເປັນເອກະພາບຈາກທຸກລັດພາຄີ.

## ມາດຕາ 10: ການໃຫ້ສັດຕະຍາບັນ ຫຼື ການຍອມຮັບ.

ອະນຸສັນຍາ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຫຼື ຍອມຮັບຈາກລັດຖະບານຂອງລັດພາຄີ. ມາດ ຕານີ້ແມ່ນຍັງໃຊ້ກັບກໍລະນີທີ່ມີການດັດແກ້ອະນຸສັນຍາເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 11: ຜົນບັງຄັບໃຊ້.

ອະນຸສັນຍາ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ ທີ່ລັດພາຄີຢ່າງນ້ອຍ 2 ປະເທດ ໄດ້ໃຫ້ສັດ ຕະຍາບັນ ຫຼື ຍອມຮັບ ແລະ ຈະມີຜົນກັບສະເພາະປະເທດທີ່ໃຫ້ສັດຕະຍາບັນແລ້ວເທົ່ານັ້ນ. ມາດຕານີ້ແມ່ນ ຍັງໃຊ້ກັບກໍລະນີທີ່ມີການດັດແກ້ອະນຸສັນຍາເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 12: ການປັບປຸງກົດໝາຍພາຍໃນປະເທດ.

ໃນກໍລະນີທີ່ຈຳເປັນ, ລັດພາຄີ ຕ້ອງໄດ້ດຳເນີນການປັບປຸງກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບເນື້ອໃນອະນຸສັນຍານີ້.

## ມາດຕາ 13: ຂໍ້ສະຫງວນ.

ບໍ່ອະນຸຍາດໃຫ້ມີການຕັ້ງຂໍ້ສະຫງວນຕໍ່ອະນຸສັນຍານີ້.

## ມາດຕາ 14: ການຢຸດຕິການນຳໃຊ້ອະນຸສັນຍາ.

ລັດພາຄີແຕ່ລະປະເທດ ສາມາດຈະຢຸດຕິການນຳໃຊ້ອະນຸສັນຍາຊົ່ວຄາວ ທັງໝົດ ຫຼື ບາງສ່ວນໂດຍທັນທີເມື່ອມີກໍລະນີສຸກເສີນທີ່ມີຜົນກະທົບຕໍ່ຄວາມປອດໄພພາຍໃນປະເທດ. ລັດພາຄີ ຈະຕ້ອງແຈ້ງຕໍ່ລັດພາ ຄີອື່ນຮັບຮູ້ໂດຍໄວທີ່ສຸດກ່ຽວກັບການຢຸດຕິການນຳໃຊ້ອະນຸສັນຍາ ແລະ ຈະສິ້ນສຸດລົງທັນທີທີ່ເຫດ ການກັບ ສູ່ສະພາວະປົກກະຕິ.

## ມາດຕາ 15: ການພົວພັນກັບສັນຍາ.

ໃນຖານະທີ່ເປັນມາດຕະການໃນການດຳເນີນການຕາມຫຼັກການທີ່ກຳນົດໄວ້ໃນສັນຍາ, ອະນຸສັນຍາ ຈະຕ້ອງບໍ່ມີການບິດເບືອນ ຫຼື ຂັດຕໍ່ຫຼັກການດັ່ງກ່າວ. ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ອະນຸສັນຍາ ແລະ ສັນຍາ ແມ່ນໃຫ້ຖືເອົາສັນຍາເປັນຫຼັກ ແລະ ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ອະນຸສັນຍານີ້ກັບອະນຸສັນ ຍາອື່ນ ຫຼື ເອກະສານຊ້ອນທ້າຍ ໃຫ້ຕີຄວາມໝາຍໂດຍອາໄສສັນຍາເປັນຫຼັກ.

**ມາດຕາ 16: ການແກ້ໄຂຂໍ້ຂັດແຍ່ງ.**

ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການຕີຄວາມໝາຍ ຫຼື ການນໍາໃຊ້ອະນຸສັນສະບັບນີ້ ລະຫວ່າງລັດ ພາຄີ ນັບແຕ່ 2 ປະເທດ ຫຼື ຫຼາຍກວ່ານັ້ນ ຈະຖືກແກ້ໄຂໂດຍກົງ ຫຼື ໂດຍຜ່ານການເຈລະຈາຢ່າງສັນຕິວິທີໃນຄະນະກໍາມະການຮ່ວມກັນ.

**ມາດຕາ 15: ການຍົກເລີກ.**

ເມື່ອອະນຸສັນຍາມີຜົນບັງຄັບໃຊ້ແລ້ວ, ອະນຸສັນຍານີ້ບໍ່ສາມາດຖືກຍົກເລີກແຍກຕ່າງຫາກຈາກສັນ ຍາໄດ້.

ເພື່ອເປັນພະຍານຕໍ່ເອກະສານນີ້, ຜູ້ລົງນາມຂ້າງລຸ່ມນີ້ ແມ່ນໄດ້ຮັບມອບສິດຢ່າງຖືກຕ້ອງໃນການລົງ ນາມໃນອະນຸສັນຍານີ້.

ລົງນາມ ທີ່ ຄຸນມິງ, ວັນທີ 05 ກໍລະກົດ 2005 ໂດຍເປັນພາສາອັງກິດ ຊຶ່ງມີຕົ້ນສະບັບຈານວນ 06 ສະບັບ.

**ລົງນາມ ໂດຍ:**

ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ

ພະນະທ່ານ Sun Chanthol

ລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະບານແຫ່ງສາທາລະນະລັດ ປະຊາຊົນ ຈີນ

ພະນະທ່ານ Zhang Chunxian

ລັດຖະມົນຕີວ່າການກະຊວງສື່ສານ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພະນະທ່ານ ສົມພົງ ມົງຄົນວິໄລ

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ

ລັດຖະບານແຫ່ງສະຫະພາບ ມຽນມາ

ພະນະທ່ານ Soe Tha

ລັດຖະມົນຕີວ່າການກະຊວງພັດທະນາເສດຖະກິດ ແລະ ແຜນການແຫ່ງຊາດ

ລັດຖະບານແຫ່ງລາຊະອານາຈັກ ໄທ

ພະນະທ່ານ Suriya Jungrungreangkit

ລັດຖະມົນຕີວ່າການກະຊວງຄົມມະນາຄົມ

ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ພະນະທ່ານ Bui Ba Bong

ລັດຖະມົນຕີຊ່ວຍວ່າການກະຊວງກະສິກຳ ແລະ ການພັດທະນາຊົນນະບົດ